# ຫຼັກສູດ ສໍາລັບອົບຮົມ ອາສາສະມັກ ໄວໜຸ່ມ “ເພືອນຊ່ວຍເພື່ອນ”

ສະມາຄົມສົ່ງເສີມສຸຂະພາບຄອບຄົວ, 2016

# ບົດທີ 2 (45 ນາທີ)

# ຄຸນຄ່າ ແລະ ສັກສີ ຂອງບຸກຄົນ

# ຄຸນຄ່າ

- ແມ່ນສິ່ງ ທີ່ບຸກຄົນ ເຊື່ອວ່າ, ຍຶດຖື ແລະ ປະຕິບັດ ເພາະ ເຫັນໃນຄວາມສຳຄັນຂອງສິ່ງນັ້ນ
- ແຕ່ລະ ບຸກຄົນ ສາມາດພັດທະນາ ຄຸນຄ່າຂອງຕົນເອງ ຈົນກາຍເປັນນິໄສ
- ຄຸນຄ່າ ແມ່ນໄດ້ຮັບ ອິດທິພົນ ຈາກ ຫຼາຍໆບ່ອນ ຫຼື ຈາກສິ່ງຄົມ ເຊັ່ນ ໃນຄອບຄົວ,ໃນກຸ່ມໝູ່ເພື່ອນ, ໃນໂຮງຮຽນ, ບ່ອນເຮັດວຽກ, ທາງສາດສະໜາ ແລະ ກາຍເປັນວັດທະ ນະທຳຂອງບ້ານ ເມືອງ, ປະເທດຊາດນັ້ນ
- ຄຸນຄ່າຂອງບຸກຄົນມີຫຼາຍໝວດ: ສະແດງອອກດ້ານຮ່າງກາຍ, ການພົວພັນກັບຄົນອື່ນ, ສະແດງອອກດ້ານຈິດຕະສາດ (ຈິດໃຈ)

# ຕົວຢ່າງ ຄຸນຄ່າ ທາງຮ່າງກາຍ

| ທາງຮ່າງກາຍ | | |
|---|---|---|
| ຄວາມງາມ<br>ຄວາມສະອາດ<br>ແຂງແກ່ງ/ທົນທານ<br>ວ່ອງໄວ<br>ປະຕິບັດເວລາໄດ້ດີ<br>ເຮັດວຽກມີປະສິດທິພາບ<br>ເຮັດວຽກທົນທານ<br>ມີລະບຽບວິໄນ<br>ມີຄວາມປອດໄພ<br>ມີຄວາມຊັດເຈນ<br>ມີຄວາມສົມບູນ<br>ເຮັດວຽກຍອດຢ້ຽມ<br>ມີຄວາມສະໝ່ຳສະເໝີ | | |

# ຕົວຢ່າງ ຄຸນຄ່າ ດ້ານການພົວພັນ ກັບຄົນອື່ນ

| | ການພົບພັນຄົນອື່ນ | |
|---|---|---|
| | ເທົ່າທຽມກັນ<br>ໃຫ້ການຮ່ວມມື<br>ປະສານງານ<br>ມີສ່ວນຮ່ວມນໍາ<br>ຖືວ່າແມ່ນຊຸມຊົນດຽວກັນ<br>ມີອິດສະລະ<br>ເຄົາລົບນັບຖື<br>ໃຈກວ້າງຂວາງ<br>ຈິງໃຈຕໍ່ກັນ<br>ເຊື່ອໃຈກັນ<br>ສ້າງບັນຍາກາດ<br>ບໍລິການຜູ້ອື່ນ<br>ເຮັດເປັນທີມງານ | |

# ຕົວຢ່າງ ຄຸນຄ່າ ດ້ານຈິດໃຈ/ຈິດຕະສາດ

| | | ດ້ານຈິດຕະສາດ |
|---|---|---|
| | | ມີຄຳສັນຍາ<br>ແບບໂລດໂຜນ/ຕື່ນເຕັ້ນ<br>ແບບປະດິດສ້າງ<br>ມີຄວາມຕັດສິນໃຈ<br>ມີຄວາມຫວັງ<br>ຄວາມດີ<br>ຄວາມຮູ້<br>ໜ້າສັນລະເສີນ<br>ຊື່ນຊົມຍິນດີ<br>ເປີດເຜີຍ<br>ຄວາມຮັກ<br>ເຊື່ອໝັ້ນຕົນເອງ<br>ນັບຖືຕົນເອງ |

ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)

# ຕົວຢ່າງ ຄຸນຄ່າ

| ທາງຮ່າງກາຍ | ການພົບພັນຄົນອື່ນ | ດ້ານຈິດຕະສາດ |
|---|---|---|
| ຄວາມງາມ | ເທົ່າທຽມກັນ | ມີຄໍາສັນຍາ |
| ຄວາມສະອາດ | ໃຫ້ການຮ່ວມມື | ແບບໂລດໂຜນ/ຕື່ນເຕັ້ນ |
| ແຂງແກ່ງ/ທົນທານ | ປະສານງານ | ແບບປະດິດສ້າງ |
| ວ່ອງໄວ | ມີສ່ວນຮ່ວມນໍາ | ມີຄວາມຕັດສິນໃຈ |
| ປະຕິບັດເວລາໄດ້ດີ | ຖືວ່າແມ່ນຊຸມຊົນດຽວກັນ | ມີຄວາມຫວັງ |
| ເຮັດວຽກມີປະສິດທິພາບ | ມີອິດສະລະ | ຄວາມດີ |
| ເຮັດວຽກທົນທານ | ເຄົາລົບນັບຖື | ຄວາມຮູ້ |
| ມີລະບຽບວິໄນ | ໃຈກວ້າງຂວາງ | ໜ້າສັນລະເສີນ |
| ມີຄວາມປອດໄພ | ຈິງໃຈຕໍ່ກັນ | ຊື່ນຊົມຍິນດີ |
| ມີຄວາມຊັດເຈນ | ເຊື່ອໃຈກັນ | ເປີດເຜີຍ |
| ມີຄວາມສົມບູນ | ສ້າງບັນຍາກາດ | ຄວາມຮັກ |
| ເຮັດວຽກຍອດຢ້ຽມ | ບໍລິການຜູ້ອື່ນ | ເຊື່ອໝັ້ນຕົນເອງ |
| ມີຄວາມສະໜໍ່າສະເໝີ | ເຮັດເປັນທີມງານ | ນັບຖືຕົນເອງ |

# ສັກສີ

- ແມ່ນຄວາມຮູ້ສຶກທີ່ມີຕໍ່ ຕົວເຮົາເອງ ແລະ ມັນແມ່ນ ຜ່ານຄວາມຮັບຮູ້ ຕໍ່ໂລກອ້ອມຂ້າງຕົວເຮົາ (ແລະ ຕໍ່ຜູ້ອື່ນ)
- ຄວາມຮູ້ສຶກດີ ຕໍ່ຕົວເຮົາເອງ: ຄວາມຮູ້ສຶກວ່າ ເຊື່ອໝັ້ນຕໍ່ຕົນເອງ, ຕໍ່ການປະພຶດຂອງຕົນ ດ້ວຍການກະທຳທີ່ດີ, ທີ່ຖືກຕ້ອງ, ມີຄວາມພູມໃຈໃນຕົນເອງ ໃນສິ່ງທີ່ເຮັດໄດ້ດີ ມີຄວາມກ້າວໜ້າ ມີຄວາມແຂງແກ່ງ, ຊື່ນຊົມຍິນດີ ໃນຜົນສຳເລັດ, …
- ຄວາມຮູ້ສຶກເຫຼົ່ານີ້ ມັນບົ່ງບອກວ່າ ເຮົາເອງກໍມີສັກສີ ແລະ ຍິ່ງມີຄົນອື່ນຮັບຮູ້ ແລະ ນັບຖືໃນກຽດສັກສີຂອງເຮົາ, ເຮົາຍິ່ງເຫັນໄດ້ຄຸນຄ່າຂອງເຮົາວ່າເຮົາມີກຽດສັກສີ
- ການເຄົາລົບນັບຖືບຸກຄົນ ແມ່ນເຄົາລົບນັບຖືບຸກຄົນ ທີ່ເຮົາເອງຊື່ນຊົມ ແລະ ເຊື່ອຖື ໃນຄຸນງາມຄວາມດີ, ໃນການປະພຶດ, ທັດສະນະ (ຄຳເຫັນ) ແລະ ເຮົາຈະສະແດງດ້ວຍທ່າທາງທີ່ສຸພາບກັບເຂົາເຈົ້າ